ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ກົດໝາຍ
# ວ່າດ້ວຍຄ່າທຳນຽມສານ

## ໝວດທີ I
## ຫຼັກການລວມ

**ມາດຕາ 1**: ກົດໝາຍວ່າດ້ວຍຄ່າທຳນຽມສານ ມີໜ້າທີ່ປະກອບສ່ວນສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງຊາດ, ອຳນວຍຄວາມສະດວກໃຫ້ແກ່ວຽກງານຂອງສານ ແລະການດຳເນີນຄະດີ ແລະຮັບປະກັນການເກັບຄ່າທຳນຽມສານ ໃຫ້ເປັນເອກະພາບໃນທົ່ວປະເທດ.

**ມາດຕາ 2**: ຄ່າທຳນຽມສານປະກອບດ້ວຍອາກອນຂອງລັດ, ຄ່າໃຊ້ຈ່າຍຕ່າງໆ ໃນການດຳເນີນຄະດີ ແລະຄ່າສຳເນົາເອກະສານຕ່າງໆ.

**ມາດຕາ 3**: ຄ່າທຳນຽມສານໃຫ້ເກັບ ແລະຈ່າຍເປັນເງິນກີບ.

**ມາດຕາ 4**: ພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາທີ່ຖືກເຊີນເຂົ້າມາສານ ແລະພະ ນັກງານທີ່ລົງເຮັດວຽກນັ້ນ ຈະໄດ້ຮັບຄ່າທົດແທນຈຳນວນເງິນທີ່ພວກກ່ຽວໄດ້ໃຊ້ຈ່າຍເປັນຄ່າເດີນທາງ, ຄ່າພັກເຊົາ ແລະຄ່າຢູ່ກິນປະຈຳວັນ.

ຜູ້ຊ່ຽວຊານ, ຜູ້ແປພາສາ, ຜູ້ສົ່ງເອກະສານ ແລະຜູ້ຮັກສາຂອງກາງ ຈະໄດ້ຮັບຄ່າແຮງງານໃນເວລາປະຕິບັດວຽກງານຕາມການມອບໝາຍຂອງສານ ຕາມລະບຽບການສະເພາະ.

ສຳລັບກຳມະກອນ, ລັດຖະກອນ ທີ່ຖືກຮຽກເຂົ້າມາສານ ໃນຖານະເປັນພະຍານນັ້ນ ໃຫ້ຮັກສາເງິນເດືອນເດີມຂອງຜູ້ກ່ຽວໄວ້. ສ່ວນພະຍານທີ່ບໍ່ແມ່ນກຳມະກອນ, ລັດຖະກອນ ຊຶ່ງຖືກຮຽກເຂົ້າມາສານ ໂດຍປະວຽກງານປະຈຳວັນນັ້ນ ຜູ້ກ່ຽວກໍຈະໄດ້ຮັບຄ່າຕອບແທນຄືນ

## ໝວດທີ II
## ຄ່າທຳນຽມສານທາງແພ່ງ

**ມາດຕາ 5 (ໃໝ່)**: ທຸກຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ອນຈະນຳໄປປະຕິບັດຕ້ອງເສັຍອາກອນຂອງລັດ ຕາມມູນຄ່າຂອງຊັບທີ່ສານໄດ້ຕັດສິນໃຫ້ດັ່ງລຸ່ມນີ້:

1. ຄຳຕັດສິນທີ່ມີມູນຄ່າໃຫ້ເສັຍ ສອງສ່ວນຮ້ອຍຂອງມູນຄ່ານັ້ນ ແຕ່ສູງສຸດບໍ່ໃຫ້ເກີນໜຶ່ງຮ້ອຍພັນກີບ;

2. ຄຳຕັດສິນ ກ່ຽວກັບການຢ່າຮ້າງໃຫ້ເສັຍສອງພັນກີບ;

3. ຄຳຕັດສິນ ກ່ຽວກັບການຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າ ເປັນຄົນຫາຍສາບສູນ ຫຼືບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຍ້ອນເປັນຄົນເສັຍຈິດ ຫຼືບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະຫລະພາບ ແຕ່ສາມປີຂຶ້ນໄປໃຫ້ເສັຍຫ້າຮ້ອຍກີບ;

4. ຄຳຕັດສິນ ກ່ຽວກັບການປ່ຽນແປງ ຫຼືຍົກເລີກສັນຍາເຊົ່າເຮືອນ ກ່ຽວກັບການອາຍັດຊັບ ແລະຄຳຕັດສິນອື່ນໆ ທີ່ມີລັກສະນະຊັບສິ່ງຂອງ ຫຼືບໍ່ສາ ມາດຕີມູນຄ່າໄດ້ໃຫ້ເສັຍຫ້າຮ້ອຍກີບ.

**ມາດຕາ 6 (ໃໝ່)**: ຄ່າຂໍລົບລ້າງຄຳຕັດສິນຂອງສານໃຫ້ເສັຍສາມພັນກີບ.

ຄ່າຂໍລົບລ້າງຄຳຕັດສິນຂອງສານ ກ່ຽວກັບການຢ່າຮ້າງໃຫ້ເສັຍໜຶ່ງພັນກີບ.

ສຳລັບຄ່າຂໍລົບລ້າງຄຳຕັດສິນຂອງສານ ທີ່ກຳນົດໄວ້ໃນຂໍ້ 3 ແລະ 4 ຂອງມາດຕາ 5 ຂອງກົດໝາຍສະບັບນີ້ ໃຫ້ເສັຍໜຶ່ງຮ້ອຍກີບ.

**ມາດຕາ 7**: ມູນຄ່າຂອງການຮ້ອງຟ້ອງໃຫ້ກຳນົດດັ່ງຕໍ່ໄປນີ້:

ໃນການຮ້ອງຟ້ອງເອົາເງິນ ໃຫ້ຖືເອົາຈຳນວນເງິນທີ່ຮ້ອງຟ້ອງເອົານັ້ນ ເປັນມູນຄ່າຂອງການຮ້ອງຟ້ອງ;

ໃນການຮ້ອງຟ້ອງເອົາຊັບສິ່ງຂອງໃຫ້ຖືເອົາມູນຄ່າຂອງຊັບສິ່ງຂອງນັ້ນ ເປັນມູນຄ່າຂອງການຮ້ອງຟ້ອງ;

ໃນການຮ້ອງຟ້ອງ ກ່ຽວກັບກຳມະສິດໃນສິ່ງທີ່ກໍ່ສ້າງ ຊຶ່ງເປັນຂອງນິຕິບຸກຄົນ ຫຼືບຸກຄົນໃຫ້ຖືເອົາມູນຄ່າຂອງສິ່ງທີ່ກໍ່ສ້າງນັ້ນ ເປັນມູນຄ່າຂອງການຮ້ອງຟ້ອງ;

ໃນການຮ້ອງຟ້ອງທີ່ມີໂຈດຫຼາຍຄົນ ໃຫ້ຖືເອົາຈຳນວນເງິນຂອງການຮ້ອງຂໍທັງໝົດ ເປັນມູນຄ່າຂອງການຮ້ອງຟ້ອງ;

ໃນການຮ້ອງຟ້ອງ ກ່ຽວກັບການຢຸດຈ່າຍ ໃຫ້ຖືເອົາຈຳນວນເງິນທີ່ຍັງບໍ່ ທັນໄດ້ຈ່າຍທັງໝົດນັ້ນ ເປັນມູນຄ່າຂອງການຮ້ອງຟ້ອງ;

ໃນການຮ້ອງຟ້ອງ ກ່ຽວກັບການຍົກເລີກສັນຍາເຊົ່າຊັບສິ່ງຂອງກ່ອນກຳ ນົດໃຫ້ຖືເອົາຄ່າເຊົ່າທີ່ຍັງເຫຼືອຕາມສັນຍານັ້ນ ເປັນມູນຄ່າຂອງການຮ້ອງຟ້ອງ.

ມູນຄ່າຂອງການຮ້ອງຟ້ອງ ແມ່ນຖືເອົາຕາມການສະເໜີຂອງໂຈດ. ໃນກໍລະນີທີ່ມູນຄ່າຂອງການຮ້ອງຟ້ອງທີ່ໂຈດສະເໜີນັ້ນ ຫາກບໍ່ສອດຄ່ອງກັບມູນຄ່າຕົວຈິງຂອງຊັບສິ່ງຂອງ ຫຼືໃນກໍລະນີທີ່ມີຄວາມຫຍຸ້ງຍາກໃນການກຳນົດມູນຄ່າຂອງການຮ້ອງຟ້ອງນັ້ນແລ້ວ ແມ່ນສານຈະເປັນຜູ້ກຳນົດ.

**ມາດຕາ 8**: ( ຖືກຍົກເລີກ ).

**ມາດຕາ 9**: ການໃຊ້ຈ່າຍໃນການດຳເນີນຄະດີແພ່ງມີ:

ການໃຊ້ຈ່າຍໃຫ້ບຸກຄົນທີ່ໄດ້ກ່າວໄວ້ໃນມາດຕາ 4 ຂອງກົດໝາຍສະ ບັບນີ້;

ການໃຊ້ຈ່າຍໃນການ<u>ຊັນນະສູດ</u>ສະຖານທີ່;

ການໃຊ້ຈ່າຍໃນການປະຕິບັດຄຳຕັດສິນຂອງສານ.

**ມາດຕາ 10**: ຈຳນວນເງິນທີ່ຈ່າຍໃຫ້ບຸກຄົນທີ່ໄດ້ກ່າວໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້ ຫຼືການໃຊ້ຈ່າຍໃນການ<u>ຊັນນະສູດ</u> ສະຖານທີ່ໃຫ້ຝ່າຍທີ່ຮ້ອງຂໍນັ້ນ ເປັນຜູ້ຈ່າຍກ່ອນ. ຖ້າວ່າຄູ່ຄວາມທັງສອງຝ່າຍຫາກເປັນຜູ້ຮ້ອງຂໍ ຫຼືຖ້າວ່າສານຫາກເປັນຜູ້ສະເໜີຽນພະຍານ, ຜູ້ຊ່ຽວຊານ ຫຼືອອກທຳການ<u>ຊັນນະສູດ</u>ສະ ຖານທີ່ແລ້ວຈຳນວນເງິນດັ່ງກ່າວ ໃຫ້ຄູ່ຄວາມທັງສອງຝ່າຍເປັນຜູ້ເສັຍຄົນລະເຄິ່ງ.

ເພື່ອຄວາມສະດວກໃນການດຳເນີນຄະດີສານ ອາດຈະກຳນົດໃຫ້ຜູ້ຍື່ນຄຳຮ້ອງຟ້ອງນັ້ນ ວາງເງິນໄວ້ນຳສານກໍໄດ້ ແຕ່ບໍ່ໃຫ້ເກີນຫ້າພັນກີບ. ຖ້າວ່າເງິນທີ່ນຳມາວາງສານນັ້ນ ຫາກບໍ່ພຽງພໍ ສຳລັບການໃຊ້ຈ່າຍແລ້ວ ສານອາດຈະໃຫ້ຜູ້ກ່ຽວນຳເງິນມາວາງຕື່ມອີກກໍໄດ້.

ໃນກໍລະນີເງິນທີ່ນຳມາວາງສານນັ້ນ ຫາກເຫຼືອຈາກການໃຊ້ຈ່າຍແລ້ວ ກໍຈະສົ່ງຄືນໃຫ້ຜູ້ກ່ຽວ.

**ມາດຕາ 11(ໃໝ່)**: ການຮ້ອງຟ້ອງທີ່ຈະໄດ້ຍົກເວັ້ນຈາກການຈ່າຍອາກອນຂອງລັດ ແລະຄ່າຂໍລົບລ້າງ ມີດັ່ງນີ້:

ການຮ້ອງຟ້ອງເອົາຄ່າແຮງງານ ຫຼືການຮ້ອງຂໍອື່ນໆ ທີ່ເນື່ອງມາຈາກສາຍພົວພັນແຮງງານຂອງກຳມະກອນ ຫຼືລັດຖະກອນ;

ການຮ້ອງຟ້ອງເອົາຄ່າລ້ຽງດູ;

ການຮ້ອງຟ້ອງຂອງບຸກຄົນໃດ ບຸກຄົນໜຶ່ງ ໃຫ້ໃຊ້ແທນຄ່າເສັຍຫາຍ ເນື່ອງມາຈາກການເສັຍອົງຄະ ຫຼືສຸຂະພາບ ຫຼືການເສັຍຊີວິດ;

ການຮ້ອງຟ້ອງຂອງອົງການສະຫວັດດີການສັງຄົມ ໃຫ້ໃຊ້ເງິນອຸດໜູນ ຫຼືເບັ້ຍບໍານານທີ່ໄດ້ຈ່າຍບໍ່ຖືກຕ້ອງນັ້ນຄືນ;

ການຮ້ອງຟ້ອງໃຫ້ໃຊ້ແທນຄ່າເສັຍຫາຍ ເນື່ອງຈາກການກະທໍາຜິດທາງອາຍາ;

ການຮ້ອງຟ້ອງຂອງອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ອົງການຈັດຕັ້ງລວມໝູ່ ຫຼືສັງຄົມອື່ນໆ ຫຼືບຸກຄົນອື່ນ;

ການຮ້ອງຟ້ອງຂອງອົງການການເງິນແຫ່ງຊາດ;

ການຮ້ອງຟ້ອງຂອງອົງການບໍລິຫານລັດ, ພະນັກງານ ຫຼືບຸກຄົນໃນຄະດີ ທີ່ເນື່ອງມາຈາກສາຍພົວພັນທາງບໍລິຫານ.

**ມາດຕາ 12**: ຝ່າຍທີ່ເສັຍຄະດີ ຕ້ອງໃຊ້ແທນຄ່າທໍານຽມສານທັງໝົດ ແກ່ຝ່າຍທີ່ຊະ ນະຄະດີ ເຖິງແມ່ນວ່າຝ່າຍທີ່ເສັຍຄະດີ ຈະໄດ້ຍົກເວັ້ນຈາກການຈ່າຍຄ່າທໍານຽມສານນັ້ນກໍຕາມ.

ຖ້າວ່າການຮ້ອງຟ້ອງ ຫາກຖືກສານຕັດສິນໃຫ້ໂຈດໄດ້ສ່ວນໃດສ່ວນໜຶ່ງແລ້ວ ຈໍາເລີຍຕ້ອງຈ່າຍຄ່າທໍານຽມສານຕາມສ່ວນທີ່ສານໄດ້ຕັດສິນໃຫ້ໂຈດນັ້ນ ການຈ່າຍຄ່າທໍານຽມສານ ໃນສ່ວນທີ່ເຫຼືອນັ້ນໃຫ້ໂຈດເປັນຜູ້ເສັຍ.

ລະບຽບການທີ່ໄດ້ກ່າວມາໃນວັກເທິງຂອງມາດຕານີ້ ກໍໃຫ້ປະຕິບັດເຊັ່ນດຽວກັນ ໃນກໍລະນີທີ່ສານຂັ້ນລົບລ້າງໄດ້ຕັດສິນໃຫ້ນັ້ນ.

**ມາດຕາ 13 (ໃໝ່)**: ໃນເມື່ອໂຈດ ຫາກຖອນຄໍາຮ້ອງຟ້ອງແລ້ວ ຈໍາເລີຍກໍຈະບໍ່ໄດ້ໃຊ້ຄ່າໃຊ້ຈ່າຍໃນການດໍາເນີນຄະດີຄືນໃຫ້ໂຈດ ທີ່ໄດ້ຈ່າຍໄປແລ້ວນັ້ນ. ຖ້າວ່າໂຈດຫາກຖອນຄໍາຮ້ອງຟ້ອງ ເນື່ອງຈາກວ່າຕົນໄດ້ມີການຕົກລົງກັບຈໍາເລີຍ ພາຍຫຼັງທີ່ໄດ້ຍື່ນຄໍາຮ້ອງຟ້ອງແລ້ວ ຈໍາເລີຍຕ້ອງໃຊ້ຄ່າໃຊ້ຈ່າຍໃນການດໍາເນີນຄະດີທັງໝົດ.

**ມາດຕາ 14**: ເມື່ອສານຫາກຕັດສິນຍົກເລີກຄໍາຮ້ອງຟ້ອງທັງໝົດ ຫຼືສ່ວນໃດສ່ວນໜຶ່ງຂອງອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ອົງການຈັດຕັ້ງລວມ ໝູ່ ຫຼືສັງຄົມອື່ນໆ ຫຼືບຸກຄົນທີ່ຮ້ອງຟ້ອງຕໍ່ສານ ເພື່ອປົກປ້ອງສິດ ແລະຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງບຸກຄົນອື່ນແລ້ວ ຈໍາເລີຍຈະໄດ້ຮັບການໃຊ້ແທນຄືນລາຍຈ່າຍໃນການດໍາເນີນຄະດີ ຊຶ່ງຜູ້ກ່ຽວໄດ້ຈ່າຍທັງໝົດ ຫຼືຕາມສ່ວນຂອງຄໍາຮ້ອງຟ້ອງຂອງໂຈດ ທີ່ສານໄດ້ຕັດສິນຍົກເລີກນັ້ນ ໂດຍຄິດໄລ່ເອົາຈາກງົບປະມານ.

**ມາດຕາ 15**: ການໃຊ້ຈ່າຍທີ່ສານໄດ້ຈ່າຍໃນການດຳເນີນຄະດີ ແລະອາກອນຂອງລັດ ທີ່ໂຈດໄດ້ຍົກເວັ້ນນັ້ນ ໃຫ້ເກັບຈາກຈຳເລີຍເຂົ້າເປັນລາຍໄດ້ຂອງລັດ ຕາມສ່ວນທີ່ສານໄດ້ຕັດສິນໃຫ້.

ໃນເມື່ອຫາກສານຕັດສິນຍົກເລີກຄຳຮ້ອງຟ້ອງຂອງໂຈດແລ້ວ ການໃຊ້ຈ່າຍທີ່ສານໄດ້ຈ່າຍໃນການດຳເນີນຄະດີນັ້ນ ໃຫ້ເກັບຈາກໂຈດ.

ຖ້າວ່າຄຳຮ້ອງຟ້ອງຂອງໂຈດ ຫາກໄດ້ຕັດສິນໃຫ້ສ່ວນໃດສ່ວນໜຶ່ງ ແລະຈຳເລີຍກໍໄດ້ຍົກເວັ້ນການຈ່າຍຄ່າທຳນຽມສານແລ້ວ ໃຫ້ເກັບຄ່າທຳນຽມສານຈາກໂຈດ ທີ່ບໍ່ໄດ້ຍົກເວັ້ນຈາກການຈ່າຍຄ່າທຳນຽມສານນັ້ນ ຕາມສ່ວນຂອງຄຳຮ້ອງຟ້ອງທີ່ສານໄດ້ຕັດສິນຍົກເລີກ.

ຖ້າວ່າທັງສອງຝ່າຍຫາກໄດ້ຍົກເວັ້ນ ຈາກການຈ່າຍຄ່າທຳນຽມສານແລ້ວ ການໃຊ້ຈ່າຍທີ່ສານໄດ້ຈ່າຍໃນການດຳເນີນຄະດີນັ້ນ ຈະແມ່ນລັດເປັນຜູ້ຈ່າຍ.

ໃນກໍລະນີທີ່ການປະກາດຊອກຫາຕົວບຸກຄົນທີ່ຫຼົບຫຼີກ ຈາກການຈ່າຍຄ່າທຳນຽມສານນັ້ນ ສານຕ້ອງໃຫ້ຜູ້ກ່ຽວໃຊ້ແທນຄ່າຈ່າຍໃນການຊອກຫາຕົວ ພ້ອມທັງຄ່າທຳນຽມສານທີ່ຍັງບໍ່ທັນໄດ້ຈ່າຍນັ້ນ ເຂົ້າເປັນລາຍໄດ້ຂອງລັດ.

**ມາດຕາ 16**: ຄຳຊີ້ຂາດ, ຄຳຕັດສິນ ຫຼືຄຳສັ່ງຂອງສານ ກ່ຽວກັບຄ່າທຳນຽມສານ ອາດຈະຂໍລົບລ້າງ ຫຼືສະເໜີຄັດຄ້ານກໍໄດ້.

## ໝວດທີ III
## ຄ່າທຳນຽມສານທາງອາຍາ

**ມາດຕາ 17**: ຄ່າທຳນຽມສານທາງອາຍາ ມີຄື:

ການໃຊ້ຈ່າຍໃຫ້ບຸກຄົນທີ່ໄດ້ກ່າວໄວ້ ໃນມາດຕາ 4 ຂອງກົດໝາຍສະ ບັບນີ້;

ການໃຊ້ຈ່າຍໃນການຮັກສາ, ນຳສິ່ງ ແລະການຄົ້ນຫາຫຼັກຖານຕ່າງໆ;

ການໃຊ້ຈ່າຍອື່ນໆ ໃນການດຳເນີນຄະດີ.

**ມາດຕາ 18**: ການໃຊ້ຈ່າຍຄ່າທຳນຽມສານທາງອາຍາ ແມ່ນໃຫ້ຜູ້ກະທຳຜິດເປັນຜູ້ເສັຍ. ໃນກໍລະນີທີ່ມີຜູ້ກະທຳຜິດຫຼາຍຄົນໃຫ້ແບ່ງກັນເສັຍຕາມຄວາມຮັບຜິດຊອບຂອງໃຜລາວ.

ໃນກໍລະນີທີ່ມີການຍົກເລີກຄະດີ ຫຼືຈຳເລີຍພົ້ນຈາກຂໍ້ກ່າວຫາ ຫຼືບຸກຄົນທີ່ຈະຕ້ອງເສັຍຄ່າໃຊ້ຈ່າຍຕ່າງໆ ໃນການດຳເນີນຄະດີອາຍາ ຫາກຢູ່ໃນສະ ພາບທີ່ບໍ່ສາມາດຈະຈ່າຍໄດ້ນັ້ນ ກໍແມ່ນລັດຈະເປັນຜູ້ຈ່າຍ.

ໃນກໍລະນີທີ່ມີການຍົກເລີກຄະດີ ເນື່ອງຈາກມີການຕົກລົງກັນລະຫວ່າງຜູ້ຖືກເສັຍຫາຍ ກັບຜູ້ຖືກຫາໃນຄະດີ ຊຶ່ງມີແຕ່ຜູ້ຖືກເສັຍຫາຍເທົ່ານັ້ນ ເປັນຜູ້ມີສິດຮ້ອງຟ້ອງໄດ້ ສານສາມາດໃຫ້ຜູ້ຖືກເສັຍຫາຍ ແລະຜູ້ຖືກຫາ ຫຼືໃຫ້ຝ່າຍໃດຝ່າຍໜຶ່ງ ເປັນຜູ້ເສັຍຄ່າໃຊ້ຈ່າຍໃນການດຳເນີນຄະດີ.